# ບົດລາຍງານການປະຊຸມກ່ຽວກັບ
# ການພັດທະນາເຄືອຂ່າຍຕາໜ່າງການກະສິກຳ
# ຕາມຂົງເຂດລະດັບແຂວງ ແລະ ເມືອງໃນພື້ນທີ່ຂອງ
# ແຂວງອຸດົມໄຊ, ແຂວງຜົ້ງສາລີ, ແຂວງບໍ່ແກ້ວ, ແລະ
# ແຂວງຫຼວງນ້ຳທາ

ເຊິ່ງໄດ້ຈັດຂຶ້ນທີ່ແຂວງອຸດົມໄຊ

ເມື່ອວັນທີ່ 26 ຫາ 27, 2007



ຈັດຂຶ້ນໂດຍ

ສູນເຜີຍແຜ່ຂໍ້ມູນແຫ່ງຊາດ (NICE), ຂະແໜງການສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ແລະ

ສູນຄວບຄຸມການຄົ້ນຄວ້າຂໍ້ມູນຂ່າວສານ (RIMaC),

ສະຖາບັນຄົ້ນຄວ້າກະສິກຳ

ແລະ ປ່າໄມ້ແຫ່ງຊາດ

# 1. ຄຳແນະນຳ ແລະ ຈຸດປະສົງເປົ້າໝາຍຂອງກອງປະຊຸມ

## *1.1 ການວິເຄາະສະຖານະພາບໂດຍທົ່ວໄປຂອງກອງປະຊຸມ*

ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFRI) ແລະ ສູນເຜີຍແຜ່ຂໍ້ມູນຂ່າວສານ ແຫ່ງຊາດ (NAFES) ໄດ້ສ້າງກຸ່ມເຮັດວຽກໃນ ການຄູ້ມຄອງການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ກະສິກຳ (AIM) ເພື່ອ ປັບປຸງການເຜີຍແຜ່ ແລະ ຂະບວນການສື່ສານໃຫ້ດີຂື້ນເພື່ອໃຫ້ເຂົ້າເຖີງຄົນ ໃນລະດັບທອ້ງຖິ່ນຢ່າງທົ່ວເຖິງ.
ເປົ້າໝາຍອັນສຳຄັນຢ່າງໜື່ງຂອງການຮ່ວມມືດັ່ງກ່າວນີ້ແມ່ນເພື່ອການພັດທະນາຕາໜ່າງເຄືອຂ່າຍຂອງຜູ້ຊື່ງ ກະຈາຍ ຂໍ້ມູນຕາມລະດັບທີ່ແຕກຕ່າງກັນ (ເຂດແຂວງ, ເຂດຕົວເມືອງ ແລະ ກຸ່ມບ້ານ) ເພື່ອປັບປຸງການ ກະຈາຍຂໍ້ມູນໃຫ້ໄປເຖີງພະນັກງານຜູ້ທີ່ເຮັດວຽກຢູ່ຕາມທົ່ງນາ ແລະ ຊາວກະສິກອນ.

ກອງປະຊຸມຄັ້ງນີ້ແມ່ນຖືກຈັດຂື້ນເພື່ອນຳສະເໜີແນວຄິດຂອງ AIM ໂດຍການເຮັດວຽກເປັນກຸ່ມກອ້ນເພື່ອ ໃຫ້ຜູ້ທີ່ຮັບຜິດຊອບຖືຫູ້ນສວ່ນຕາມເຂດແຂວງ ແລະ ຕາມຕົວເມືອງໄດ້ມີຄວາມເຂົ້າໃຈໃຫ້ດີຂື້ນ ແລະ ໃນ ຂະນະກັນນັ້ນກໍ່ເພື່ອເລີ່ມຕົ້ນສ້າງຄວາມເຂົ້າໃຫ້ດີກວ່າເກົ່າໃນການພັດທະນາກ່ຽວກັບວິທີທີ່ພວກເຮົາສາມາດ ປັບປຸງຂະບວນການຂອງການສື່ສານຂໍ້ມູນຂ່າວສານຢູ່ໃນລະດັບຂັ້ນແຂວງ ແລະ ຂັ້ນເມືອງ. ພາຍໃນກອງ ປະຊຸມມີຜູ້ເຂົ້າຮວ່ມຫຼາຍກ່ວາ 75 ຄົນ ເຊີ່ງມາຈາກສີ່ແຂວງທີ່ແຕກຕ່າງກັນເຊັ່ນ: ອຸດົມໄຊ, ຫຼວງນຳ້ທາ, ບໍ່ແກ້ວ, ແລະ ຜົ້ງສາລີ (ເບີ່ງເພີ້ມຕື່ມສຳລັບລາຍຊື່ຂອງຜູ້ເຂົ້າຮວ່ມຢູ່ ທ້າຍໜ້າ 1). ຜູ້ເຂົ້າຮວ່ມແມ່ນລວມ ມີພະນັກງານສັງກັດຕາມເຂດແຂວງ ແລະ ເຂດຕົວເມືອງ, ພະນັກງານໂຄງການ ແລະ ພະນັກງານຈາກ ພະແນກຖະແຫຼງຂ່າວ ແລະ ວັດທະນະທຳຂອງແຂວງອຸດົມໄຊ.

ບົດລາຍງານນີ້ແມ່ນສະເໜີໃຫ້ຮູ້ເຖີງບົດສະຫຼຸບໂດຍສັງລວມຂອງໝາກຜົນອັນສຳຄັນທີ່ໄດ້ມາຈາກກອງ ປະຊຸມໃນຄັ້ງນີ້ ຄືດັ່ງຕົວເລກຂອງໃບແບບທ້າຍເຊີ່ງໄດ້ມາຈາກໝາກຜົນທີ່ໄດ້ຮັບມາຈາກກອງປະຊຸມນີ້.

## *1.2 ເປົ້າໝາຍຂອງກອງປະຊຸມ*

ຈຸດປະສົງຫລັກຂອງກອງປະຊຸມໃນຄັ້ງນີ້ແມ່ນຈັດຂື້ນເພື່ອການນຳສະເໜີເຜີຍແຜ່ແນວຄິດສຳລັບການສ້າງ ຕັ້ງຂໍ້ມູນຂ່າວສານ ແລະ ການສື່ສານໂດຍການເຊື່ອມຕໍ່ໄປຫາລະດັບຊົງເຂດແຂວງ ແລະ ເຂດຕົວເມືອງ ພອ້ມທັ່ງການນຳສະເໜີຈຸດຊຸມໂດຍການສະຫຼຸບກວມລວມຂອງ AIM ໃຫ້ກັບພະນັກງານທີ່ສັງກັດ ໃນເຂດ ແຂວງ ແລະ ຕົວເມືອງ.

ຈຸດປະສົງຂອງກອງປະຊຸມແມ່ນ:

- ນຳສະເໜີແນວຄິດ ແລະ ວຽກການການເຄື່ອນໄຫວທີ່ເປັນຈຸດສຸມທັ່ງໝົດຂອງ AIM
- ແນະນຳໃຫ້ຮູ້ຈັກວິທີໃຊ້ປື້ມບັນທຶກແຫຼ່ງຂໍ້ມູນ ແລະ ຖົງແຫ່ງສະຕິປັນຍາ, ຈັດໃຫ້ມີ ການສົ່ງ ຄຳຕຳນິວິຈານກັບຄືນເປັນຄັ້ງທຳອິດ, ແລະ ພັດທະນາແກ້ໄຂແຜນການເຄື່ອນໄຫວກິດຈະກຳ ເພື່ອໃຫ້ຜູ້ເຂົ້າຮວ່ມສາມາດເອົາຄືນໄປນຳໃຊ້ໃນວຽກງານຂອງພວກເຂົາ
- ແລກປ່ຽນປະສົບການ, ຂໍ້ມູນ ແລະ ອຸປະກອນລະຫວ່າງເຂດແຂວງ ແລະ ເຂດຕົວເມືອງ
- ຊີ້ໃຫ້ເຫັນເຖີງບົດບາດທີ່ເດັ່ນຊັດໃນທຸກດ້ານ ແລະ ໜ້າທີ່ຮັບຜິດຊອບຕາມເຂດແຂວງ ແລະ ເຂດ ຕົວເມືອງ ສະເໜີຂໍ້ມູນທີ່ເປັນຈຸດໃຈກາງ ແລະ ແຜນການພັດທະນາວຽກງານທີ່ເປັນພື້ນຖານຂອງ ແຕ່ລະແຂວງ.

## 2. ການບັນລະຍາຍຈຸດປະສົງໂດຍລວມ, ບົດບາດ, ໜ້າທີ່ຮັບຜິດຊອບຂອງ AIM ຂອງ ພະນັກງານເມືອງ

ພະນັກງານສອງຄົນໄດ້ຂຶ້ນບັນຍາຍເພື່ອນຳສະເໜີຈຸດປະສົງໂດຍລວມຂອງ AIM ພ້ອມທັງອະທິບາຍ ເຖິງບົດບາດຕ່າງໆ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານໃນແຕ່ລະລະດັບທີ່ແຕກຕ່າງກັນ.

ທ່ານ ຄຳຜາຍ ມະນີວົງ ໄດ້ບັນຍາຍກ່ຽວກັບພາບສະຫຼຸບໂດຍລວມຂອງການເຮັດວຽກເປັນກຸ່ມກອັນພອ້ມທັງ ຊີ້ໃຫ້ເຫັນເຖິງການເຮັດວຽກຂອງລະບົບເຄືອຂ່າຍການຮວ່ມມືຂອງພະນັກງານ AIM ແມ່ນສາມາດຖືກ ພັດທະ ນາໃຫ້ກ້າວໜ້າໄດ້. ການຄຸ້ມຄອງການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບກະສິກຳ (AIM) ແມ່ນເປັນ ຫຸ້ນສວ່ນ ກັນ ກັບສູນເຜີຍແຜຂໍ້ມູນຂ່າວສານແຫ່ງຊາດ (NAFES) ແລະ ພະແນກຄຸ້ມຄອງຂໍ້ມູນຂ່າວສານ ແຫ່ງຊາດ ຂອງ (NAFRI). ໃນການປ່ຽນແປງສະພາບແວດລອ້ມຢ່າງໄວວາເຊັ່ນວ່າປະເທດລາວ, ຂໍ້ມູນ ຂ່າວສານ ແມ່ນ ມີການເພີ້ມຂື້ນຕໍ່ເນື່ອງ ເຊິ່ງເປັນສິ່ງສຳຄັນສຳລັບຊາວກະສິກອນ ແລະ ການຂະຫຍາຍ ຕົວແທນ ໃຫ້ກວ້າງ ອອກ. ຊາວກະສິກອນມີຄວາມຈຳເປັນທີ່ຈະຕອ້ງໄດ້ຮູ້ຈັກສິ່ງໃໝ່ໆ ທີ່ທັນສະໃໝ ແລະ ຂໍ້ມູນທີ່ຖືກຕອ້ງ ກ່ຽວກັບ ເທັກນິກກະສິກຳໃຫ່ມ, ການໃຫ້ຂໍ້ມູນກ່ຽວກັບຕະຫຼາດ ແລະ ໂຮງຈັກໂຮງງານທີ່ສົ່ງຜົນກະທົບໃຫ້ ແກ່ການເກັບກ່ຽວຜົນຜະລິດຂອງພວກເຂົາ (ເຊັ່ນ ສັດຕູພືດ, ພະຍາດໂລກລະບາດຕ່າງໆ, ດິນຟ້າອາກາດ, ແລະອື່ນໆ).

ດັ່ງນັ້ນມັນຈິ່ງຮຽກຮອ້ງໃຫ້ມີການເພີ້ມຈຳນວນຕົວແທນອອກຢ່າງຕໍ່ເນື່ອງເພື່ອໃຫ້ສາມາດຕອບສະໜອງ ເຖິງການຈັດຫາຂໍ້ມູນແຕ່ພວກເຂົາກໍ່ມີຄວາມສາມາດເລັກນອ້ຍເພື່ອຕອບສະໜອງເຖິງຄວາມຕອ້ງການ ໃຫ້ແກ່ພວກເຂົາ. ຍອ້ນສາເຫດນີ້ເອງ, AIM ຈິ່ງຖືກກໍ່ຕັ້ງຂື້ນມາເພື່ອແກ້ໄຂກັບຄວາມທ້າທາຍ ດັ່ງກ່າວນີ້.

ມັນເປັນການຖືກກ່າວຊ້ຳອີກວ່າ AIM ມັນຈະແມ່ນພຽງແຕ່ເຮັດວຽກໃນລະດັບສູນກາງເທົ່າ ນັ້ນ, ແຕ່ມັນ ຍັງກ່ຽວຄອ້ງໄປເຖິງລະດັບເຂດຕົວເມືອງ ແລະ ເຂດແຂວງອີກ. ນີ້ແມ່ນຈິນຕະນາການຂອງ AIM ເພື່ອສ້າງ ເຄືອຂ່າຍຂອງກູ່ມຜູ້ຊ່ຽວຊານຜູ້ທີ່ຮູ້ກ່ຽວກັບການຄວບຄູມຂໍ້ມູນ/ຄວາມຮູ້ເພື່ອໃຫ້ເຮັດວຽກໃນທຸກລະດັບເພື່ອ ປັບປຸງການຫຼັ່ງໄຫຼຂອງຂໍ້ມູນ ແລະ ການສື່ສານ.

ບົດບັນລະຍາຍທີ່ສອງແມ່ນບັນລະຍາຍໂດຍ ທ່ານ ສົມໄຊ ສີສາໂນ ທ່ານໄດ້ເນັ້ນໜັກກ່ຽວກັບບົດບາດ ແລະ ໜ້າທີ່ກ່ຽວກັບຂໍ້ມູນ ແລະ ການສື່ສານຂອງພະນັກງານແຂວງ ແລະ ເມືອງ. ຢູ່ໃນນັ້ນລວມມີສາມຈຸດປະສົງ ແລະ ເຈັດມາດຕະການເຊິ່ງລວມຢູ່ໃນຂໍ້ກຳນົດຂອງອຳນາດທີ່ຖືກມອບໝາຍໃຫ້ ແລະ ບົດບາດ ຂອງພວກເຂົາ[1]. ໃນການກໍ່ຕັ້ງອົງການບໍລິຫານຂື້ນມາໃໝ່ນີ້, ມີສາມລະດັບຂອງສູນຂະແໜງການບໍລິການ ທາງດ້ານເຕັກນິກແມ່ນໄດ້ລະບຸໃຫ້ເຫັນ ໄດ້ຄື: ລະດັບແຂວງ, ລະດັບເມືອງ ແລະ ເຂດກຸ່ມບ້ານພັດທະນາ. ສຳລັບບົດບາດ ແລະ ໜ້າທີ່ຮັບຜິດຊອບແມ່ນໄດ້ຖືກສົມທຽບໃຫ້ເຫັນດັ່ງລຸ່ມນີ້:

**ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງສູນເຕັກນິກໃນລະດັບທີ່ແຕກຕ່າງກັນ**

| ເຂດແຂວງ | ເຂດຕົວເມືອງ | ກຸ່ມບ້ານ |
|---|---|---|
| • ສ້າງຄວາມສາມາດໃຫ້ແກ່ ສູນ ເຕັກນິກ.<br>• ສຶກສາຮຽນຮູ້, ເກັບກຳ, ສະຫຼຸບ ແລະ ຄວບຄຸມຂໍ້ມູນ ແລະ ຄວາມຕອ້ງການ, | • ກະຕຸກຊຸກຍູ້ແລະຈັດຕັ້ງ ໃຫ້ຊາວ ບ້ານມີກຸ່ມຮຽນຮູ້ພາຍໃນບ້ານຂື້ນ ແລະ ສ້າງກຸ່ມຜະລິດຕະພັນ ທີ່ແຕກຕ່າງຂື້ນ | • ແຜ່ຂະຫຍາຍເຕັກໂນໂລຢີກວ້າງອອກ ໄປ ແລະ ວິທີ ການສ້າງຜະລິດ ຕະພັນ, ການຝຶກອົບຮົມ ແລະ ການ |

[1] ຫລັງຈາກການປະຊຸມຂະໜາດນ້ອຍໄດ້ມີການແນະນຳຄືນຄັ້ງສຳຄັນຂອງລະບົບການຂະຫຍາຍ. ພາບລວມຄຳສັ່ງໂດຍຫຍໍ້ຂອງ ນາຍຍົກລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ 216/08 ທີ່ມີໃນເອກະສານນີ້.

| ເຂດແຂວງ | ເຂດຕົວເມືອງ | ກຸ່ມບ້ານ |
| --- | --- | --- |
| ທີ່ມີສ່ວນກ່ຽວຂອ້ງ ກັບການຂະຫຍາຍ ເຕັກນິກຂອງການກະສິກຳ ແລະ ປ່າໄມ້ໃນເຂດເມືອງຕ່າງໆ ແລະ ກຸ່ມບ້ານພາຍໃນແຂວງນັ້ນ.<br>• ເສີມຂະຫຍາຍ ແລະ ເຮັດໃຫ້ສຳ ເລັດຜົນຂອງຜົນໄດ້ຮັບ ຈາກ ການຄົ້ນຄວ້າ.<br>• ຈັດຕັ້ງ ແລະ ຈັດຫານຳຜະ ລິດຕະພັນ ເຂົ້າເຊັ່ນຄວາມລາກ ຫລາຍຂອງພັນ ເຂົ້າ, ພືດພັນທັນຍາ ຫານ, ພັນສັດລ້ຽງ, ພັນປາ, ພັນຕົ້ນໄມ້, ປຸ໋ຍ, ຢາຂ້າສັດຕູພືດ, ວັກຊິນປອ້ງກັນ ພະຍາດ, ເຄື່ອງຈັກ, ຄູ່ມືຊີ້ນຳຕ່າງໆ ແລະ ອຸປະກອນ ການຂະຫຍາຍ ອອກໄປເຖິງ ຜະລິດຕະພັນ ທີ່ມີຢູ່ ພາຍໃນແຂວງ.<br>• ປະສານກັບພະແນກເຕັກນິກ ຫອ້ງ ການກະສິກຳ ແລະ ປ່າໄມ້ແຂວງ ແລະ ກັບຫອ້ງການຕົວແທນອື່ນພາຍ ນອກ ເພື່ອສ້າງ ຄວາມເຊື່ອໝັ້ນ, ນຳເຂົ້າ ຜະລິດຕະພັນ, ການລົງ ທຶນ, ຕະລາດ ຮອງຮັບ, ແລະ ຂໍ້ມູນຂ່າວສານທີ່ມີ ຄວາມກ່ຽວພັນກັນກັບສິ່ງທີ່ກຳລັງ ເວົ້າເຖິງນີ້ຈາກ ຜະລິດຕະພັນທີ່ມີພາຍ ໃນແຂວງ | ໂດຍອີງໃສ່ຕາມເງື່ອນໄຂ ແລະ ຄວາມຕອ້ງການຂອງ ປະຊາຊົນ ພາຍໃນບ້ານ<br>• ໂຄສະນາສົ່ງເສີມ ແລະ ເຜີຍແຜ່ ເຕັກໂນໂລຍີ ແລະ ວິທີການສ້າງຜົນ ຜະລິດ, ຈັດໃຫ້ມີການ ຝຶກອົບຮົມ, ແລະ ການ ຊີ້ນຳແນວທາງການຜະລິດໃຫ້ແກ່ ຊາວບ້ານ, ຈັດລະບຽບຄວາມຮູ້ເຮັດ ກິດຈະກຳແລກປ່ຽນກັນລະຫວ່າງ ຊາວບ້ານກັບກຸ່ມສ້າງຜະລິດຕະພັນ<br>• ເກັບກຳຂໍ້ມູນອີງຕາມເງື່ອນໄຂ ການຜະລິດ, ສະຫຼຸບ ແລະ ໃຫ້ຂໍ້ມູນ ຂ່າວສານກັບຫອ້ງການຕົວ ແທນຂັ້ນເທິງ ແລະ ກັບຊາວບ້ານໃນກຸ່ມບ້ານ ແລະ ພອ້ມກັບບ້ານໄກ້ຄຽງນຳອີກ<br>• ຕອບສະໜອງການນຳເຂົ້າຜະລິດຕະພັ ນເຊັ່ນວ່າ: ຄວາມລາກຫລາຍຂອງ ພັນເຂົ້າ, ພືດພັນທັນຍາຫານ, ພັນສັດລ້ຽງ, ພັນປາ, ພັນຕົ້ນໄມ້, ປຸ໋ຍ, ຢາຂ້າສັດຕູພືດ, ວັກຊິນປອ້ງກັນພະຍາດ, ເຄື່ອງມືເທັກນິກ ແລະ ເຄື່ອງຈັກ, ພອ້ມດວ້ຍຄູ່ມືຊີ້ນຳ ຕ່າງໆ ສິ່ງຕ່າງໆ ທີ່ນຳເຂົ້ານັ້ນໃຫ້ເປັນ ປະໂຫຍດ<br>• ມີການຮວ່ມມືກັນກັບຊາວບ້ານ ໃນການ ຕອບສະໜອງ ການບໍລິການ ທາງດ້ານເຕັກນິກ ເຊັ່ນວ່າ: ການຝຶກ ອົບຮົມກ່ຽວກັບການນຳໃຊ້ເຕັກໂນໂລຍີຢູ່ ກັບທີ່, ສ້າງຕັ້ງໃຫ້ມີການພິສູດໃຫ້ເຫັນ ໂດຍການສາທິດໂຄງເລື່ອງເພື່ອໃຫ້ເກີດ ການຂະຫຍາຍຜົນຂອງການຄົ້ນຄວ້າ, ການຮຽນຮູ້, ແລະ ການປະຕິບັດທີ່ດີ, ການສ້າງກົນໄກການຮວ່ມມືກັບບັນດາ ຄອບຄົວຕົວແບບ, ກຸ່ມສ້າງຜົນຜະລິດ, ທຸລະກິດສວ່ນບຸກຄົນຫຼືນາຍທຶນ | ແລກປ່ຽນປະສົບການລະ ຫວ່າງ ຊາວກະສິກອນດວ້ຍກັນ ປະຕິບັດໜ້າ ທີ່ໃນ ການສ້າງຜົນຜະລິດໃຫ້ສຳ ເລັດຜົນແລະຕອບ ສະໜອງຜະລິດ ຕະພັນນຳເຂົ້າເຊັ່ນວ່າ: ຄວາມລາກ ຫລາຍຂອງພັນ ເຂົ້າ, ພືດພັນທັນຍາ ຫານ, ພັນສັດລ້ຽງ, ພັນປາ, ພັນຕົ້ນໄມ້, ປຸ໋ຍ, ຢາຂ້າສັດຕູພືດ, ວັກ ຊິນປອ້ງກັນ ພະຍາດ, ເງິນກອງທຶນກູ້ຢືມ ແລະ ສິນເຊື່ອ, ອຸປະກອນກົນໄກ, ເຄື່ອງມື ເທັກນິກ,ເຄື່ອງຈັກ, ພອ້ມດວ້ຍ ຄູ່ມື ຊີ້ນຳຕ່າງໆ ສິ່ງຕ່າງໆ ທີ່ນຳເຂົ້ານັ້ນໃຫ້ ເປັນປະໂຫຍດ<br>• ຕອບສະໜອງບັນຫາຂໍ້ມູນ ຂ່າວສານ ແລະ ຄວາມຕອ້ງການ ຂອງຜູ້ຜະລິດ ແລະນາຍທຶນ, ສະພາບການຜະລິດ ແລະແນວໂນ້ມທີ່ມີ ການປ່ຽນແປງ<br>• ຈັດຕັ້ງກຸ່ມຜະລິດ, ພັດທະນາພະ ນັກງານວິຊາການທ້ອງຖິ່ນ, ຊີ້ນຳໃນການ ຜະລິດຕົວຈິງ, ຈັດຫາສະຖານທີ່ ປູກຝັງ ເພື່ອ ຂະຫຍາຍຜົນໄດ້ຮັບມາຈາກການ ຮ່ຳຮຽນ ແລະ ການນຳໃຊ້ທີ່ດີທີ່ສຸດ. ສິ່ງເຫລົ່ານີ້ຈະ ກາຍເປັນພາກສ່ວນໜຶ່ງ ຂອງຕາໜ່າງ ການເຮັດວຽກໃນກຸ່ມບ້ານ |

*ແຫຼ່ງຂໍ້ມູນ: ອີງຕາມການປະຕິບັດຊີ້ນຳຂອງນາຍຍົກລັດຖະມົນຕີອອກຄຳສັ່ງເລກທີ 0216/MAF 08 (06 ມີນາ 2008)*

## 3. ບົດແນະນຳເຖິງຜະລິດຕະພັນ ແລະ ການບໍລິການຂອງ AIM

ບອ່ນປະຈຳການເຮັດການເຄື່ອນໄຫວຕ່າງໆ ຫົກແຫ່ງຂອງ AIM (ແລະ ບອ່ນໜຶ່ງແມ່ນມາຈາກພະແນກ ຖະແຫຼງຂ່າວ ແລະ ວັດທະນະທຳແຂວງ) ໄດ້ຖືກຈັດຂຶ້ນຈຸດປະສົງເພື່ອໃຫ້ຜູ້ເຂົ້າຮວ່ມສາມາດມີສວ່ນຮວ່ມ ໃນວຽກງານກິດຈະກຳຢ່າງເປີດເຜີຍໃນວຽກງານທີ່ NAFRI ແລະ NAFES ພວມປະຕິບັດໜ້າທີ່ຢູ່. ມັນຍັງ ເປັນການເປີດໂອກາດໃນການຮັບເອົາຄວາມຄິດເຫັນ ຫຼື ຄຳຕຳນິວິຈານກັບຄືນມາຈາກພະນັກງານທີ່ສັງກັດ ຕາມເຂດແຂວງ ແລະ ຕົວເມືອງເພື່ອເຮັດໃຫ້ຜະລິດຕະພັນສາມາດຕອບສະໜອງ ກັບຄວາມຮຽກຮອ້ງຕອ້ງ ການຂອງຊາວກະສິກອນໄດ້ດີທີ່ສຸດ.

ຂ້າງລຸ່ມນີ້ແມ່ນບົດສະຫຼຸບອັນໜຶ່ງຂອງຜົນທີ່ອອກມາ ແລະ ຄຳຄິດເຫັນອັນສຳຄັນຈາກບອ່ນປະຈຳການ ທັງ່ຫົກແຫ່ງ:

| ກິດຈະກຳ | ຄຳຄິດເຫັນໂດຍທົ່ວໄປ |
|---|---|
| ຫູ້ນສວ່ນລະຫວ່າງ LNTV ແລະ NAFES | • ໃນຕົວເມື່ອງບາງເຂດມີ CDs ແຕ່ພັດບໍ່ມີເຄື່ອງຫຼິ້ນ CD ເພື່ອເຜີຍແຜ່ທິດສະດີໃຫ້ແກ່ຊາວບ້ານ.<br>• ໃຊ້ພາສາລາວທີ່ເປັນສຳນຽງວຽງຈັນ, ແຕ່ຊາວບ້ານພັດບໍ່ເຂົ້າໃຈ ແລະ ພວກເຂົາກໍ່ຕອ້ງການໃຫ້ເວົ້າເປັນພາສາທອ້ງຖິ່ນ<br>• ມີຄວາມສົນໃຈກ່ຽວກັບ CDs ໃນຫົວຂໍ້ສະເພາະຂອງເຕັກໂນໂລຍີ. ມັນຄວນຈະເປັນຫົນທາງໜຶ່ງສຳລັບການເກັບກຳເຖິງຄວາມຕອ້ງການຈາກປະຊາຊົນຕາມເຂດຕົວເມືອງ ແລະ ເຂດແຂວງ ແລະ ຄວນຕອບສະໜອງຢ່າງໄວ. |
| ຈົດໝາຍຂ່າວຂອງ NAFRI ແລະ NAFES | • ຫົວເລື່ອງຄວນຖືກເພີ້ມເຕີມແລະເປັນເລື່ອງໃໝ່ທີ່ຫາກໍ່ເກີດຂຶ້ນໃນ ປັດຈຸບັນ ແລະ ເນັ້ນໜັກເຖິງການເຄື່ອນໄຫວວຽກງານໃນລະດັບຕົວເມືອງ. ເນັ້ນໜັກໃສ່ຊາວນາ, ໂຄງການ, ບໍລິສັດ<br>• ເນັ້ນໜັກໃສ່ຄວາມເພິງພໍໃຈໃນການໃຊ້ເຕັກນິກເຊັ່ນວ່າ: ການລ້ຽງເຜີ້ງ, ການເພາະປູກໝາກເພັດ<br>• ມັນຍັງມີຄວາມຕອ້ງການທີ່ຈະຊອກຫາຫົນທາງເພື່ອໃຫ້ພະນັກງານທີ່ສັງກັດຢູ່ຕາມແຂວງແລະຕາມຕົວເມືອງໃຫ້ມີການແຈກຢາຍຈົດ ໝາຍຂ່າວສານ. |
| ສ້າງຂໍ້ມູນຂອງຄອມພິວເຕີ້ກ່ຽວກັບການກະເສດ | • ຄວນຈະໃຫ້ມີຫົນທາງໃດໜຶ່ງເພື່ອໃຫ້ແຕ່ລະແຂວງສາມາດສົ່ງຕໍ່ຂໍ້ມູນ ຫາ LAD ເພື່ອສະສົມຂໍ້ມູນຈາກແຕ່ລະແຂວງ<br>• ຕອ້ງການໃຫ້ມີພາສາລາວຫລາຍຂື້ນ<br>• ຄວນມີການເນັ້ນໜັກໃສ່ການໄດ້ຮັບການຂໍ້ມູນນັ້ນຂອງພະນັກງານໃຫ້ເປັນສວ່ນກ່ຽວພັນກັນ<br>• ໂຄສະນາສົ່ງເສີມ LAD ໂດຍຜ່ານຈົດໝາຍຂ່າວຫລືການສົ່ງຂໍ້ມູນອອກໄປໂດຍການກອ໋ບປີ້ໃສ່ເຈ້ຍແທນ |
| ສາຍກ່ຽວພັນໃນລາວ | • ຂາດການຕິດຕໍ່ຫາຂໍ້ມູນທາງອິນເຕີເນັດ, ຂາດຄອມພິວເຕີ່, ແລະ ບໍ່ມີໄຟຟ້າ<br>• ມີຂໍ້ມູນກ່ຽວກັບເຕັກໂນໂລຍີໃໝ່ໆ ທີ່ເກີດຂື້ນຢູ່ພາຍໃນລາວ<br>• ພະແນກ ICT ຄວນໄດ້ຮັບການຈັດຕັ້ງຂຶ້ນເພື່ອເປັນຕົວປະສານງານກັນລະຫວ່າງ ແຂວງ, ຕົວເມືອງແລະເພື່ອຮວບຮວມເອົາປັນຫາທຸກຢ່າງກ່ຽວກັບການສ້າງຜົນຜະລິດມາໄວ້ເພື່ອສະດວກຕໍ່ການປຶກສາຫາລື |
| ຂໍ້ມູນຂ່າວສານແລະວັດທະນະທຳແຂວງ | • ມັນຮຽກຮອ້ງໃຫ້ມີການເພີ້ມການຮວ່ມມືກັນລະຫວ່າງຫອ້ງການ ວັດທະນະທຳ ແລະ ຫອ້ງການຂໍ້ມູນຂ່າວສານແລະກັບ PAFOs<br>• ມີຜະລິດຕະພັນຫລາຍທີ່ຖືກຜະລິດຂື້ນມາແຕ່ພັດຍັງບໍ່ທັນໄດ້ສົ່ງອອກຢ່າງກວ້າງຂວາງ |
| ການສຶກສາຂໍ້ມູນຂ່າວສານແລະການສື່ສານ | • ການສຶກສາຮຽນຮູ້ແມ່ນໄດ້ຮັບຄວາມສົນໃຈເປັນຢ່າງດີແລະຄວນຈະມີການຈັດຂື້ນຕາມຂົງເຂດອື່ນອີກດວ້ຍ<br>• ມັນມີຄວາມຮຽກຮອ້ງໃຫ້ມີການນຳໃຊ້ຫົນທາງດັ່ງກ່າວນີ້ເຂົ້າໃນການຄົ້ນຄວ້າໃນການພັດທະນາວຽກງານຂອງຊາວກະສິກອນ |

# 4. ຂໍ້ສະຫຼຸບຂໍ້ມູນຄວາມຕອ້ງການຂອງຕະຫລາດພາຍໃນແຂວງ

ແຕ່ລະແຂວງແມ່ນຖືກກຳນົດໃຫ້ມີການຈັດຕຽມການວາງສະແດງເຖິງຈຸດເດັ່ນທີ່ມີຂໍ້ມູນຜົນຜະລິດແຕກຕ່າງກັນເຊິ່ງນຳສະແດງອອກໂດຍພະນັກງານໂຄງການຫລືພະນັກງານຂອງລັດພອ້ມກັບບົນລະຍາຍບົດສະຫຼຸບ ສັ້ນໆກ່ຽວກັບບັນຫາສຳຄັນ ແລະ ການເປີດໂອກາດໃຫ້ແຕ່ລະເມືອງ. ການເຮັດວຽກງານດັ່ງກ່າວນີ້ກໍ່ເພື່ອເປັນການແລກປ່ຽນຜົນໄດ້ຮັບ ແລະ ຮູ້ຈັກບັນຫາທີ່ເກີດຂື້ນຂອງແຂວງອື່ນໆ.

ບາງຜົນສະຫຼຸບທີ່ສຳຄັນເຊິ່ງເກີດເກີດຂື້ນລວມມີ:

- ການແລກປ່ຽນອຸປະກອນລະຫວ່າງໂຄງການຕ່າງໆຢູ່ພາຍໃນແຂວງແມ່ນຍັງມີ ໜອ້ຍຢູ່ດັ່ງນັ້ນ ມັນຈຶ່ງມີຄວາມຮຽກຮອ້ງຕອ້ງການໃຫ້ມີການສ້າງຕັ້ງສູນເກັບມ້ຽນຂໍ້ມູນທາງດ້ານເທັກນິກແກ່ປະຊາຊົນພາຍໃນແຂວງ ແລະ ຈັດໃຫ້ມີໂອກາດອັນດີໃຫ້ມີການແລກປ່ຽນເຊິ່ງກັນ ແລະ ກັນພາຍໃນແຂວງຢ່າງສະໝ່ຳສະເໝີ
- ຈຳນວນຕົວເລກໜຶ່ງຂອງຜົນສະຫຼຸບທີ່ເກີດຂື້ນພາຍໃນກອງປະຊຸມເຊິ່ງຖືກຕັດອອກສວ່ນຫລາຍແລ້ວເປັນບັນຫາທຳມະດາທີ່ມີຢູ່ທົ່ວທຸກທົນທຸກແຫ່ງຕາມເມືອງ ແລະ ແຂວງຕ່າງໆ, ໃນນີ້ລວມ ມີຄື:
    - ບັນຫາກ່ຽວກັບເລື່ອງການອະນຸຍາດຍິນຍອມໃນການປະສານງານກັນຂອງບໍລິສັດ ແລະ ວິການແກ້ໄຂບັນຫາກ່ຽວກັບການຕໍ່ສັນຍາ ແລະ ການປະຕິບັດຕາມກົດລະບຽບກ່ຽວກັບ ການລົງທຶນ
    - ບັນຫາເລື່ອງການຄຸ້ມຄອງທີ່ດິນກໍ່ໃຫ້ເກີດມີການໂຕ້ຖຽງກັນເພີ້ມຫລາຍຂື້ນ, ຍອ້ນຄວາມບໍ່ຊັດເຈນຂອງສິດທິການເປັນເຈົ້າຂອງຂອງຊາວກະສິກອນ, ສວ່ນຫລາຍແມ່ນບໍ່ໄດ້ປະຕິບັດຕາມກົດລະບຽບຂອງການຈັດສັນແບ່ງເຂດແດນປ່າໄມ້ມີການປ່ຽນແປງເພີ່ມຂື້ນເລື້ອຍໆ.
    - ໃຫ້ຂໍ້ມູນຄວາມຮູ້ໃຫ້ແກ່ຊາວກະສິກອນໃຫ້ຮູ້ເຖິງສິດທິ ແລະ ໜ້າທີ່ຮັບຜິດຊອບຂອງ ພວກເຂົາທີ່ມີໃນຊວ່ງເວລາທີ່ຄຸ້ມຄອງທີ່ດິນ
    - ໃຫ້ຂໍ້ມູນຄວາມຮູ້ແກ່ຊາວກະສິກອນໃຫ້ເຂົ້າໃຈເຖິງວິທີການຕໍ່ສັນຍາ ແລະ ໂອກາດທາງການຕະຫລາດ

# 5. ແຜນການປະຕິບັດຂອງແຂວງ

ທຸກໆ ແຂວງແມ່ນຈະຕອ້ງໄດ້ກຳນົດຂໍ້ມູນຄວາມຕອ້ງການໃຫ້ຊັດເຈນ, ຂໍ້ມູນອັນສຳຄັນທີ່ສຸດ ແລະບັນຫາການຕິດຕໍ່ສື່ສານ ພອ້ມກັບວາງແຜນເຖິງຄວາມແຕກຕ່າງຂອງຜູ້ປະຕິບັດຕົວຈິງ ແລະ ຄວາມກ່ຽວພັນຂອງພວກເຂົາ. ຂ້າງລຸ່ມນີ້ເປັນບົດສະຫຼຸບຂອງແຕ່ລະແຂວງ. ຕໍ່ທ້າຍຕົວທີ່ສອງໄດ້ສະແດງ ເຖິງຂໍ້ມູນໃນແຜນທີ່ໆແຕ່ລະແຂວງຕອ້ງໄດ້ປະຕິບັດ.

## 5.1 ແຂວງບໍ່ແກ້ວ

ຂໍ້ມູນທີ່ສຳຄັນທີ່ສຸດແຂວງບໍ່ແກ້ວຕອ້ງການແນ່ໃສ່ຄວາມແຕກຕ່າງຂອງຜົນລະປູກເພື່ອຂາຍເຊັ່ນວ່າ: ຖົ່ວຂຽວ, ຖົ່ວດິນ, ເຂົ້າສາລີ ແລະ ສາລີເພາະວ່າແຂວງບໍ່ແກ້ວມີໂອກາດທາງດ້ານການປູກພືດເພື່ອ ການຄ້າເປັນຈຳນວນຫລວງຫລາຍ. ໄດ້ຊອກຫາຂໍ້ມູນເຕັກນິກແຕ່ມັນມີການເນັ້ນໜັກເພີ້ມເຕີມໃຫ້ມ ຄວາມເຂົ້າໃຈດີຍິ່ງ ຂື້ນກ່ຽວກັບການເຮັດສັນຍາ, ລາຄາສິນຄ້າຕາມທອ້ງຕະຫລາດ, ສິດທິກຳມະສິດທີ່ດິນ ແລະ ຂໍ້ມູນອັນຈຳເປັນກ່ຽວກັບການສ້າງຕັ້ງກຸ່ມຜະລິດ, ສວ່ນບັນຫາໃຫຍ່ສະເພາະແຂວງທີ່ຊີ້ໃຫ້ເຫັນແມ່ນ ການຂາດການປະສານງານກັນລະຫວ່າງສຳນັກງານທີ່ຕ່າງກັນ. ພວກເຂົາໄດ້ນຳສະເໜີການສ້າງ ໜ່ວຍງານກ່ຽວກັບຂໍ້ມູນຂ່າວສານສາທາລະນະເພື່ອຊວ່ຍເຜີຍແຜ່ຂໍ້ມູນ ແລະ ປັບປຸງການປະສານງານ.

**ແຜນການປະຕິບັດຂອງແຂວງບໍ່ແກ້ວ**

| ພັນລະນາເນື້ອໃນລະອຽດຕ່າງໆ ໃນກິດຈະກຳ | ຜູ້ເຂົ້າຮ່ວມ | ຕອ້ງການໃຫ້ສະໜັບສະໜູນໃນດ້ານໃດ | ໄລຍະເວລາຂອງການປະຕິບັດ |
|---|---|---|---|
| ປ້າຍໂຄສະນາການຊື້ຊາທຳມະຊາດ | RDMA, AIM ເມືອງ, DAFO | ງົບປະມານສຳລັບການພິມ ແລະ ກອ້ງຖ່າຍຮູບ | ເດືອນ 9 / 2007 |
| CD ທີ່ສະແດງການດຳເນີນການປູກຝັງກ່ຽວກັບຖົ່ວຂຽວ, ຖົ່ວດິນ, ສາລີ. | RDMA, AIM ເມືອງ, DAFO | ງົບປະມານສຳລັບຊື້ CD ສະແດງການປະຕິບັດ | ເດືອນ 8 – 9/2007 |
| ສ້າງຕັ້ງສູນເກັບກຳຂໍ້ມູນໃນລະດັບເມືອງ | RDMA, VECO, DAFO | ຖົງໃສ່ເຄື່ອງອຸປະກອນການກະເສດ ໃບຍາວຈຳນວນ20ຖົງ | ເດືອນ 7–9 / 2007 |
| ຈັດກອງປະຊຸມຂະໜາດນ້ອຍລະບົບຂໍ້ມູນ ແລະ ຂໍ້ມູນຂ່າວສານ | RDMA, VECO, DAFO, AIM ເມືອງ | ງົບປະມານສຳລັບການຈັດກອງ ປະຊຸມ ຂະໜາດນ້ອຍ | ເດືອນ 8 / 2007 |

## 5.2 ແຂວງຫລວງນ້ຳທາ

ສຳລັບຂໍ້ມູນຫລັກແມ່ນແນ່ໃສ່ຂໍ້ມູນກ່ຽວກັບການຕະຫລາດສຳລັບທັງສອງດ້ານຄືຕົວແທນຂະຫຍາຍ ແລະ ບັນດາຊາວກະສິກອນ. ເຊິ່ງໃນນີ້ມັນໄດ້ກວມລວມເຖິງຂໍ້ມູນກ່ຽວກັບບໍລິສັດ, ມາດຕະຖານຂອງການ ຕະຫລາດ ແລະ ຂັ້ນຕອນການດຳເນີນ, ປະລິມານ, ແລະ ລາຄາ. ຂໍ້ມູນເຕັກນິກລວມທັງບັນດາວິທີການຜະລິດພອ້ມກັບຂໍ້ມູນທີ່ຊາວກະສິກອນໄດ້ປະຕິບັດຈິນປະສົບຜົນສຳເລັດເພື່ອໃຫ້ມີການກະຈາຍອອກຢ່າງກວ້າງຂວາງ.ກ່ຽວກັບບັນຫາສຳຄັນຂອງແຂວງດັ່ງກ່າວໄດ້ກຳນົດກ່ຽວກັບການຂາດບຸກຄະລາກອນ,ໂຄງລ່າງໄດ້ຖືກຈຳກັດ ແລະ ອຸປະກອນ ພ້ອມດຽວກັນນັ້ນຍັງບໍ່ມີສຳນັກງານເພື່ອໃຫ້ຂໍ້ມູນຂ່າວສານສາທາລະນະການແກ້ໄຂບັນຫາດັ່ງກ່າວນີ້ຍັງໄດ້ລວມເອົາການຝຶກອົບຮົມເພີ້ມຕື່ມ ແລະ ການຊື້ອຸປະກອນ.

**ແຜນການປະຕິບັດຂອງແຂວງຫລວງນ້ຳທາ**

| ກິດຈະກຳ | ໜ່ວຍງານກ່ຽວຂ້ອງ | ຜົນທີ່ຕາມມາ | ສຳນັກງານທີ່ກ່ຽວຂ້ອງ | ຕອ້ງການໃຫ້ສະໜັບສະ ໜູນ |
|---|---|---|---|---|
| AIM ແຂວງໄດ້ມີການຈັດຕັ້ງຂື້ນເມື່ອວັນເດືອນກັນຍາ 2007 | ໜ່ວຍງານຂອງພະແນກກະສິກຳ ແລະ ປ່າໄມ້ | ຕົວແທນຈາກແຕ່ລະໜ່ວຍງານໜຶ່ງຄົນຈະຮັບຜິດຊອບໃນກິດຈະກຳ | ກົມບໍລິຫານ ແລະ ການວາງແຜນດຳເນີນງານ DAFO | ງົບປະມານສຳລັບການຈັດກອງປະຊຸມຂະໜາດນ້ອຍ |
| ຈັດຕັ້ງຮູບແບບລະບົບແຟ້ມ ເອກະສານ (ເດືອນກໍລະກົດ 2007)<br>ສະໜອງໃບປິວໂຄສະໜາ100 ແຜ່ນ 3 ຫາ4ເດືອນ<br>ໄດ້ແຈກຢາຍ CD (ເດືອນສິງຫາ 2007)<br>ການກະຈາຍສຽງທາງວິທະຍຸປະຈຳ ອາທິດ | DAFO, PAFO, AIM ເມືອງ | ຈັດສັນຕູ້ສຳລັບໄວ້ເອກະສານໃຫ້ແຕ່ລະເມືອງ.<br>- ຮັບຮູ້ ແລະ ເຂົ້າໃຈຂ່າວສານ (ໃໝ່ໆ) | DAFO, PAFO | ງົບປະມານ |

| ກິດຈະກຳ | ໜ່ວຍງານກ່ຽວຂ້ອງ | ຜົນທີ່ຕາມມາ | ສຳນັກງານທີ່ກ່ຽວຂ້ອງ | ຕອ້ງການໃຫ້ສະໜັບສະ ໜູນ |
|---|---|---|---|---|
| ການສ້າງທີມໃຫ້ຂໍ້ມູນຂ່ວສານ<br>ທີວຂໍ້ສຳລັບໃບປີວໂຄສະໜາ (ປະຈຳເດືອນ)<br>ສະເໜີຂໍ້ໝູນ ໃຫ້ DAFO ປະຈຳເດືອນ | DAFO, ພະນັກງານສະໜັບສະໜູນຈາກ NCA ແລະ GTZ.<br>ໜ່ວຍງານການບໍລິຫານ | ຕົວແທນຈາກແຕ່ລະໜ່ວຍງານໜຶ່ງຄົນຈະຮັບຜິດຊອບໃນກິດຈະກຳ.<br>ສະເໜີຂໍ້ມູນ ແລະ ໃບໂຄສະໜາໃຫ້ NAFES (ທຸກໆເດືອນ) | ສຳນັກງານຂໍ້ມູນຂ່າວສານເມືອງ DAFO | ງົບປະມານສຳລັບການຈັດກອງປະຊຸມຂະໜາດນ້ອຍ |

## 5.3 ແຂວງອຸດົມໄຊ

ຂໍ້ມູນທີ່ສຳຄັນທີ່ສຸດເຊິ່ງຊີ້ໃຫ້ເຫັນຂອງແຂວງອຸດົມໄຊຕອ້ງການແມ່ນຄວາມຮູ້ທາງດ້ານລາຄາຕະຫລາດ, ປະລິມານ, ຄຸນນະພາບ, ຄວາມຮູ້ກ່ຽວກັບການເຮັດໃບສັນຍາ ແລະ ການລົງ ທຶນ ແລະ ການສ້າງແຫລ່ງ ຂໍ້ມູນຂອງຊາວຄ້າຂາຍພາຍໃນແຂວງ. ສຳລັບຂໍ້ມູນທາງດ້ານເຕັກນິກສວ່ນໃຫຍ່ແລ້ວແມ່ນກ່ຽວກັບຢາງ ພາລາ, ສັດລ້ຽງ ແລະ ການປູກພືດປະຈຳປີຕົວຢ່າງເຊັ່ນ: ໝາກເພັດ, ມັນຕົ້ນ, ແລະ ອື່ນໆ

ບັນຫາສຳຄັນຢູ່ພາຍໃນແຂວງລວມມີຄື:

- ມີຂໍ້ຈຳກັດໃນການຮວ່ມມືລະຫວ່າງຫອ້ງການຕົວແທນ
- ການເຜີຍແຜ່ຂໍ້ມູນໃນລະດັບທ້ອງຖິ່ນແມ່ນຊັກຊ້າ
- ມີແຫລ່ງເກັບກຳຂໍ້ມູນມີຄວາມຈຳກັດ
- ມີຫຼາຍຊົນເຜົ່າ ແລະ ຕອ້ງການຜະລິດຂໍ້ມູນຂ່າວສານໃນແຕ່ລະພາສາ.

ການແກ້ໄຂບັນຫາສຳຄັນທີ່ສຸດແມ່ນການປັບປຸງການປະສານງານຜ່ານການສ້າງຫ້ອງການການຈັດພິມໜັງສື ກ່ຽວກັບຂໍ້ມູນພ້ອມດຽວກັນນັ້ນຊອກຫາການສະໜັບສະໜູນເພື່ອຜະລິດອຸປະກອນຕ່າງໆ ຕື່ມອີກ ແລະ ຜະລິດເປັນຫຼາຍໆພາສາສາທາລະນະຊົນຂື້ນຄຽງຄູ່ກັນໄປກັບການຊອກຫາກອງທຶນສະໜັບສະໜູນສຳລັບ ອຸປະກອນການພະລິດເພີ້ມຂື້ນອີກ ແລະ ຈັດໃຫ້ມີຫຼາຍໆພາສາທີ່ແຕກຕ່າງກັນ.

**ແຜນການປະຕິບັດຂອງແຂວງອຸດົມໄຊ**

| ກິດຈະກຳ | ເວລາ | ໜ້າທີ່ຮັບຜິດຊອບ | ຜູ້ສະໜັບ ສະໜູນ |
|---|---|---|---|
| ຜະລິດເລື່ອງກ່ຽວກັບເທັກໂນໂລຢີການຜະລິດ (VCD, TV), ສາລີ ແລະ ຢາງພາລາ | ເດືອນກໍລະກົດ ຫາ ເດືອນກັນຍາ | ກະຈາຍຂໍ້ມູນຂ່າວ ສານ ແລະ ວັດທະນະ ທຳ PAFO, PAFEC | NAFRI, NAFES, IFAD, GAA |
| ການຜະລິດອຸປະກອນ<br>• ຍົກລະດັບແນວພັນເຂົ້າ<br>• ການປູກໝາກສາລີ<br>• ໝາກໄມ້<br>• ການຜະລິດທີ່ໄດ້ຈາກປ່າ NTFPs<br>• ການເຮັດສວນຄົວ<br>• ການຈັດພື້ນທີ່ຫາປາ<br>• ການເພາະພັນລູກປາ<br>• ການຮວບຮວມວຽກງານການກະເສດ<br>• ພືດຜັກທີ່ອອກຕາມລະດູການ | ເດືອນກໍລະກົດ ຫາ ເດືອນກັນຍາ | ພະນັກງານເມືອງ ແລະແຂວງຂອງ GAA, IFAD | NAFRI, NAFES, IFAD, GAA |
| ຜະລິດເລື່ອງລາວສຳລັບລາຍການວິທະຍຸ ແລະ | ເດືອນກໍລະກົດ ຫາ | ກະຈາຍຂໍ້ມູນຂ່າວ ສານ ແລະ | NAFRI, NAFES, IFAD |

| ກິດຈະກຳ | ເວລາ | ໜ້າທີ່ຮັບຜິດຊອບ | ຜູ້ສະໜັບ ສະໜູນ |
|---|---|---|---|
| ໂທລະໂຄງໃນໝູ່ບ້ານໃນຫລາຍໆພາສາ ທີ່ແຕກຕ່າງກັນ<br>- ການລ້ຽງສັດ<br>- ສາລີ<br>- ການກະສິກຳ | ເດືອນກັນຍາ | ວັດທະນະ ທຳ PAFO, PAFEC | |
| ປັບປຸງຫອ້ງສະໝຸດທີ່ PAFO | ເດືອນກໍລະກົດ ເດືອນທັນວາ | PAFO | NAFRI, NAFES |

## 5.4 ແຂວງຜົ່ງສາລີ

ຄວາມຕ້ອງການສຳລັບຂໍ້ມູນກ່ຽວກັບການຕະຫລາດທົ່ວໄປໄດ້ກຳນົດລວມມີລາຄາ, ປະລິມານ, ຄຸນນະພາບ, ແລະ ບັນດາຜູ້ຄ້າຂາຍ.  ຂໍ້ມູນເຕັກນິກໄດ້ແນ່ໃສ່ການຍົກລະດັບແນວພັນເຂົ້າ. ຍົກລະດັບ ແຫລ່ງອາຫານສຳລັບການລ້ຽງສັດ. ຂໍ້ມູນກ່ຽວກັບການພັດທະນາສວນຊາ, ຂໍ້ມູນກ່ຽວກັບດິນຟ້າອາກາດ ແລະ ປະເພດຂອງແນວພັນພືດທີ່ຈະປູກ. ພວກເຂົາຍັງໄດ້ກຳນົດຄວາມຕ້ອງການທີ່ຈະສົ່ງຂໍ້ມູນທີ່ດີກວ່າ ກ່ຽວກັບມາດຕະການ ແລະ ນະໂຍບາຍໃຫ້ແກ່ຊາວນາ.

ບັນຫາສຳຄັນທີ່ສຸດໄດ້ກຳນົດຄືຂາດເຂີນຊັບພະຍາກອນເຊັ່ນ: ເງິນ, ບຸກຄະລາກອນ ແລະ ວັດຖຸ ເຊັ່ນດຽວກັນນີ້ຍັງມີການລາຍງານຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ຂາດຄວາມຮູ້ໃນການຜະລິດບັນດາອຸປະກອນ ຂໍ້ມູນຂ່າວສານ. ມີຄຳແນະນຳວ່າຂໍ້ມູນທີ່ສຳຄັນທັງໝົດຂອງລະບົບຂໍ້ມູນຂ່າວສານຕ້ອງໄດ້ຊຸກຍູ້ເພື່ອໃຫ້ ປະຊາຊົນຮູ້ຈັກຄຸນປະໂຫຍດຂອງມັນ.

**ແຜນການປະຕິບັດຂອງແຂວງຜົ້ງສາລີ**

| ສາລະບານ | ສຳນັກງານທີ່ກ່ຽວຂ້ອງ | ເວລາ | ຕອ້ງການໃຫ້ສະໜັບສະໜູນ |
|---|---|---|---|
| ໃບປິວບັນຫາເຕັກນິກ | ສຳນັກງານທີ່ກ່ຽວຂອ້ງ ກັບ PAFO | ເດືອນ ກໍລະກົດ | ງົບປະມານ ການຝຶກອົບຮົມ ອຸປະກອນ |
| ແຕ່ງຕັ້ງຄະນະກຳມະການ ລະບົບຂໍ້ມູນ ສະເໜີການຝຶກອົບຮົມໃຫ້ກັບ ພະນັກງານຕາມສຳນັກງານ ເມືອງ ແລະ ແຂວງ | PAFO, PAFES ສຳນັກງານບໍລິຫານ ແລະ ປົກຄອງເມືອງ DAFO | ເດືອນສິງຫາ | |
| ພັດທະນາອຸປະກອນສຳລັບການຂະຫຍາຍທີ່ໄດ້ ກຳນົດໄວ້ໜຶ່ງ ຫົວຂໍ້ | MAF, NAFES ສະຖາບັນການຄົ້ນ ຄວ້າ AF | ເດືອນກັນຍາ | ງົບປະມານ ປື້ມຄູ່ມື |
| ຈັດກອງປະຊຸມຂະໜາດນ້ອຍ ກ່ຽວກັບການຜະລິດກະສິກຳ ສຳລັບຜົນຜະລິດນັ້ນ | PAFES, NAFES, DAFO ບຸກຄົນທົ່ວໄປ | ເດືອນຕຸລາ | ງົບປະມານ ເອກະສານ ອຸປະກອນ |
| ຈັດຕັ້ງກອງປະຊຸມຂະໜາດນ້ອຍເພື່ອແລກປ່ຽນ ຂໍ້ມູນຂ່າວສານ ປະຈຳປີ | NAFES, PAFES ສະຖາບັນການຄົ້ນ ຄວ້າ AF | ເດືອນພະຈິກ | |

## 6. ບົດສະຫລຸບ ແລະ ຄຳແນະນຳທີ່ດີ

ບົດສະຫຼຸບ ແລະ ຄຳຄິດທີ່ດີ ເຫັນສ່ວນໃຫຍ່ເຊິ່ງໄດ້ມາຈາກກອງປະຊຸມແມ່ນມີຄືດັ່ງລຸ່ມນີ້:

*1. ມັນມີຄວາມຮຽກຮ້ອງຕອ້ງການໃຫ້ມີການປະສານງານກັນແລະຫວ່າງສາຍວຽກງານຕົວແທນທີ່ແຕກຕ່າງກັນໃນລະດັບເມືອງ ແລະ ແຂວງ*

ມີຕາໜ່າງການເຮັດວຽກຢູ່ໃນລະດັບຊາດ, ແຕ່ມີຄວາມຕ້ອງຈັດຕາໜ່າງການເຮັດວຽກໃນລະດັບແຂວງ ແລະ ລະດັບເມືອງ, ມັນອີງຕາມ 4 Cs (ປະສານງານ, ການຮ່ວມມື, ການສື່ສານ, ແລະ ຊຸມຊົນ). ຈຳເປັນຕ້ອງມີການແຕ່ງຕັ້ງໃນການຄວບຄຸມ/ປະສານຂໍ້ມູນ ແລະ ຕາໜ່າງການເຮັດວຽກຈຳເປັນຕ້ອງແມ່ນ 1 ຫຼື 2 ຄົນ.

ຄວາມກ່ຽວພັນລະຫວ່າງຄວາມແຕກຕ່າງກັນຂອງຫ້ອງການຕົວແທນເມືອງແລະແຂວງຈຳເປັນທີ່ຈະຕອ້ງມີການປັບປຸງພ້ອມດຽວກັນນັ້ນ ກົນໄກການປະສານງານລະຫວ່າງລະດັບທີ່ແຕກຕ່າງກັນ. ຕົວຢ່າງ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳຂອງແຂວງອຸດົມໄຊແມ່ນມີຄວາມສາມາດຫລາຍ
ເຜີຍແຜ່ຂໍ້ມູນຂ່າວສານຜ່ານໂທລະໂຄງໃນໝູ່ບ້ານໃນພາສາຕ່າງໆ. ມັນເປັນທ່າແຮງໃຫ້ແກ່ PAFO ໃນການເຮັດວຽກນຳພວກເຂົາເຈົ້າ.

*ຄຳແນະນຳທີ່ດີ:*

ຄວນມີການພະຍາຍາມຍົກລະດັບການປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານລະຫວ່າງ ຫ້ອງການຕົວແທນຂອງສາຍງານ, ສະເພາະລະຫວ່າງສູນບໍລິການຂະຫຍາຍເຕັກນິກຂອງແຂວງ, ແລະ ລະຫວ່າງຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳຂອງແຂວງ.

*2. ມີຄວາມຕອ້ງການມອບໝາຍໜ້າທີ່ໃຫ້ກັບພະນັກງານໃນການປະຕິບັດງານການບໍລິ ການຂໍ້ມູນຂ່າວສານ*

ບໍ່ມີສະຖານທີ່ຮັກສາຂໍ້ມູນຂ່າວສານ ຫຼື ບໍ່ມີພະນັກງານຜູ້ທີ່ຈະຮັບຜິດຊອບກ່ຽວກັບຂໍ້ມູນຂ່າວສານ. ຍົກຕົວຢ່າງ: ແຕ່ລະເມືອງ ຫຼື ແຂວງໄດ້ຮັບປື້ມທີ່ບັນທຶກແຫລ່ງຂໍ້ມູນ, ແຕ່ວ່າຄົນສວ່ນຫຼາຍແມ່ນບໍ່ ເຄີຍເຫັນປື້ມຫົວນັ້ນມາກອ່ນ. ພະນັກງານບໍ່ແນ່ໃຈກ່ຽວກັບການຈັດການຖືງທີ່ບັນຈຸສະຕິປັນຍາ, ຖ້າປະໃຫ້ປະຊາຊົນນຳໃຊ້ມັນ, ພວກເຂົາກໍ່ບໍ່ໄດ້ສົ່ງປື້ມຄືນ.

*ຄຳແນະນຳທີ່ດີ:*

ແຕ່ລະແຂວງ ຫຼື ເມືອງມອບໜ້າທີ່ໃຫ້ພະນັກງານແຂວງ 1 ຫຼື 2 ຄົນ ແລະ ໜຶ່ງຄົນຢູ່ໃນແຕ່ລະເມືອງໃຫ້ຮັບຜິດຊອບຂໍ້ມູນຂ່າວສານ. ນອກຈາກນັ້ນຍັງມີຄວາມຕ້ອງການສຳລັບ MAF ອອກຄຳສັ່ງເພື່ອໃຫ້ແຂວງນັ້ນມີຄວາມຄິດທີ່ຈະແຈ້ງວິທີສ້າງແຜນ ແລະ ຮວບຮວມຂຶ້ນແຜນໃໝ່.

*3. ຕາໜ່າງການເຮັດວຽກ ແລະ ການແລກປ່ຽນປະສົບການ*

ຂໍ້ມູນການຕະຫລາດຂອງແຂວງໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ມີຫລາຍອຸປະກອນທີ່ໄດ້ຜະລິດ ໂດຍໂຄງການ ແຕ່ອຸປະກອນເຫລົ່ານີ້ຍັງໄປບໍ່ທົ່ວເຖິງທຸກບ່ອນຂອງເມືອງ. ຫລາຍເທື່ອ, ໂຄງການທີ່ເຮັດວຽກຢູ່ໃນເມືອງດຽວກັນບໍ່ຮູ້ວ່າໂຄງການອື່ນມີຫຍັງແດ່. ນອກຈາກນັ້ນ, ໄດ້ພົບເຫັນວ່າວຽກປະເພດດຽວກັນນີ້ມີຄຸນຄ່າສຳລັບການແລກປ່ຽນປະສົບການໄປທົ່ວທຸກເມືອງ ແລະ ແຂວງ, ເພື່ອຊຸກຍູ້ສົ່ງເສີມ ໃຫ້ຫລາຍຂຶ້ນ.

ແລະອີກຢ່າງ, ມັນມີຄວາມຕ້ອງການໜ່ວຍງານສູນກາງການປະສານງານ ຫຼື ສະຖານທີ່ພິເສດເພື່ອເກັບຮັກສາຂໍ້ມູນຂ່າວສານໄວ້. ປັດຈຸບັນນີ້, ຍັງບໍ່ມີແຂວງໃດທີ່ເຮັດວຽກກ່ຽວກັບຫອ້ງສະໝຸດ ຫຼື ວິທີຈັດການ ແລະ ຮັກສາຂໍ້ມູນຂ່າວສານໄວ້.

*ຄຳແນະນຳທີ່ດີ:*

ໂຄງການຕ້ອງພະຍາຍາມເພື່ອແລກປ່ຽນປະສົບການ ແລະ ບົດຮຽນທັງໝົດ ຫຼື ຢ່າງໜ້ອຍທີ່ສຸດ ຕ້ອງມີການແລກປ່ຽນອຸປະກອນຂໍ້ມູນຂ່າວສານທີ່ໄດ້ຜະລິດເປັນປະຈຳ. ແຕ່ລະແຂວງຄວນຄິດສຳລັບການພັດທະນາຫ້ອງສະໝຸດທີ່ສາມາດນຳໃຊ້ໂດຍຜູ້ປະຕິບັດທັງໝົດ. AIM ຄວນຈະພະຍາຍາມສ້າງຄວາມໝັ້ນ ໃຈວ່າການອັດເອກະສານຂໍ້ມູນຂ່າວສານແມ່ນໄດ້ເຜີຍແຜ່ສູ່ພະນັກງານເມືອງ ແລະ ພະນັກງານແຂວງ ຫຼື ເພື່ອໃຫ້ແນ່ໃຈວ່າສິ່ງທີ່ພວກເຂົາໄດ້ຜະລິດແມ່ນມີຄວາມສອດຄ່ອງ.

*4. ຕອ້ງການໃຫ້ມີການພັດທະນາຜົນຜະລິດທົ່ວທຸກດ້ານ, ການເຜີຍແຜ່ແນວທາງປະຕິບັດ ແລະ ການນຳໃຊ້ອຸປະກອນ*

ມີພຽງສີ່ຈຸດທີ່ສຳຄັນທີ່ສຸດດັ່ງນີ້:

- ມັນມີການຄົ້ນຊອກຫາວິທີທາງທີ່ຈະຮັບເອົາຂໍ້ມູນຂ່າວສານເພີ້ມຢ່າງສະໝ່ຳສະເໝີຈາກລະດັບ ທ້ອງຖິ່ນ. ຜົນຜະລິດຂອງ AIM ແມ່ນມີຄຸນຄ່າຫລາຍ, ແຕ່ຕ້ອງມີການຊອກຫາວິທີເຜີຍແຜ່ອອກ ຢ່າງກວ້າງຂວາງ. ຍົກຕົວຢ່າງ: ວີດີໂອຊີດີຕ້ອງມີການຜະລິດອອກໃຫ້ປະຊາຊົນໃນລະດັບທ້ອງ ຖິ່ນ ແລະ ພວກເຮົາຕ້ອງການຊອກຫາວິທີແກ້ບັນຫາກ່ຽວກັບເຕັກໂນໂລຢີ ແລະ ໄຟຟ້າ. ຂໍ້ມູນພື້ນຖານຂອງການກະສິກຳລາວຕ້ອງໄດ້ລົງໃສ່ໃນແຜ່ນວີຊີດີດ້ວຍ.
- ສຳລັບການກະກຽມຜົນຜະລິດໃໝ່ທີ່ຢູ່ໃນລະດັບກາງແມ່ນຂຶ້ນກັບຄວາມສາມາດທາງເຕັກນິກທີ່ ສູງ ແລະ ອຸປະກອນ, ແຕ່ວ່າຕ້ອງມີການຮ່ວມມືກັບລະດັບທ້ອງຖິ່ນລະຫວ່າງຂັ້ນຕອນການຜະລິດ ເພາະວ່າລະດັບທ້ອງຖິ່ນມີຂໍ້ມູນຂ່າວສານທີ່ຈຳເປັນ.
- ຖ້າຂໍ້ມູນນັ້ນຈະມີຄຸນຄ່າໃຫ້ແກ່ຊາວກະສິກອນ, ແມ່ນຕ້ອງມີການເຮັດເປັນພາສາທ້ອງຖິ່ນ. ໂດຍສະເພາະແມ່ນຄົນທຸກຈົນ ແລະ ແມ່ຍິງເພາະວ່າພວກເຂົາບໍ່ຄ່ອຍໄດ້ເວົ້າພາສາລາວ.
- ຖືງແທ່ງສະຕິປັນຍາແມ່ນເປັນແຫລ່ງຄົ້ນຫາຂໍ້ມູນທີ່ມີຄ່າທີ່ສຸດ, ແຕ່ພວກເຮົາກໍຊອກຫາວິທີ ຈັດການ ແລະ ເຮັດໃຫ້ຂໍ້ມູນທີ່ມີການນຳໃຊ້ພາຍໃນ ແລະ ພົບເຫັນຄວາມຕ້ອງການໃນພູມສັນ ຖານທີ່ແຕກຕ່າງກັນ

*ຄຳແນະນຳທີ່ດີ:*

ແບບຢ່າງຂໍ້ມູນຂ່າວສານລະດັບຊາດຄວນຈະໄດ້ພັດທະນາໃຫ້ສາມາດນຳໃຊ້ ຫຼື ປັບປຸງເຂົ້າກັບສະພາບ ທ້ອງຖິ່ນ. ໃນຂະນະດຽວກັນນີ້, ການຜະລິດໃນລະດັບແຂວງ ແລະ ເມືອງຕ້ອງໃຫ້ມີຄວາມເຂັ້ມແຂງເພື່ອພວກເຂົາຈະສາມາດເຮັດອຸປະກອນຂອງເຂົາເອງໄດ້. ສຸດທ້າຍນີ້, ຄວນຈະສັ່ງໃຫ້ຜະລິດອຸປະກອນໃນພາສາຊົນເຜົ່າຂອງທ້ອງຖິ່ນ ຫຼື ຊອກຫາວິທີເຮັດໃຫ້ປະຊາຊົນຊົນບັນດາເຜົ່າສາມາດນຳໃຊ້ຂໍ້ມູນຂ່າວສານນີ້ໄດ້ຢ່າງງ່າຍດາຍ. (ໃຫ້ຮູ້ໄວ້ວ່າ ຄົນສ່ວນຫລາຍບໍ່ສາມາດອ່ານ ຫຼື ເວົ້າພາສາລາວ ໄດ້ດີ).

*5. ຖອດຖອນບົດຮຽນ ແລະ ຊ່ອງທາງໃນການຄົ້ນຄວ້ານະນາຄົມ*

ມີສອງປະເດັນຖືກຍົກຂຶ້ນມາຄື:

- ມັນຈຳເປັນຕອ້ງໄດ້ຊອກຫາຫົນທາງເພື່ອການສື່ສານໃຫ້ປະສົບຜົນສຳລັດໃນການປະຕິບັດ ຫຼື ບັນຫາທີ່ມີໃນລະດັບທອ້ງຖິ່ນກ້າວໄປເຖິງລະດັບແຂວງ ແລະ ລະດັບຊາດ. ມັນຍັງມີອີກຫລາຍປ ສົບການທີ່ໄດ້ຮັບມາຈາກທອ້ງຖິ່ນ ແລະ ສິ່ງທີ່ຄວນມີການຂະຫຍາຍອອກກວ້າງໄປອີກ. ຕົວຢ່າງເຊັ່ນ: ຈົດໝາຍຂ່າວສານຂອງ NAFRI ແລະ NAFES ຄວນລວມຢູ່ໃນການປະຕິບັດທີ່ປະສົບຜົນສຳເລັດຈາກລະດັບທອ້ງຖິ່ນ.
- ໃນທິດທາງດຽວກັນ, ພວກເຮົາກໍ່ຕອ້ງການສ້າງຖືງເຈົ້າບັນຫາ ແລະ ຮຽນຮູ້ເຖິງບູລິມະສິດທີ່ມີຂອງ ແຕ່ລະເມືອງ ແລະ ກຸ່ມບ້ານເພື່ອພະເຊີນກັບບັນຫາ ແລະ ບູລິມະສິດຂອງໃນຂົງເຂດສະເພາະ ແລະ ເພື່ອແກ້ໄຂບັນຫາດັ່ງກ່າວ. ອີກເທື່ອໜຶ່ງພວກເຂົາຕອ້ງການເຖິງກົນໄກເພື່ອຊວ່ຍເຫຼືອໃນການແກ້ໄຂ ບັນຫາເລົ່ານີ້.

*ຄຳແນະນຳທີ່ດີ:*

ພວກເຮົາມີການທົດສອບເຖິງແບບຢ່າງເພື່ອໃຫ້ສາມາດປັບປຸງຂໍ້ຕຳນິທີ່ສົ່ງກັບມາ ແລະ ທ່ຽງຕົງຕໍ່ກັບຊອ່ງທາງ ການສື່ສານດັ່ງນັ້ນພວກເຮົາຈື່ງສາມາດກຳນົດວິທີການປະຕິບັດທີ່ດີທີ່ສຸດເພື່ອນຳໄປແກ້ໄຂບັນຫາຈາກລະດັບທອ້ງຖິ່ນ.